**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງແຜນການ ແລະການລົງທຶນ

ເລກທີ 1372/ຜທ.ຣມສ-ສປຊ.8

ນະຄອນຫຼວງວຽງຈັນ, ວັນທີ 03 JUL 2017

**ແຈ້ງການ**

**ຮຽນ:** ທ່ານ ລັດຖະມົນຕີ ກະຊວງແຮງງານ ແລະສະຫວັດດີການສັງຄົມ ທີ່ນັບຖື,

**ເລື່ອງ:** ອະນຸມັດຮັບເອົາ ແຜນງານສະໜັບສະໜູນ ການສ້າງຄວາມເຂັ້ມແຂງ ໃຫ້ແກ່ຫ້ອງການ ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອການແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງຢູ່ ສປປ ລາວ (NRA) ແລະໂຄງການເກັບກູ້ລະເບີດແຫ່ງຊາດ (UXO Lao) ສົກປີ 2017-2021. ທີ່ໄດ້ຮັບການສະໜັບສະໜູນຈາກ ອົງການ ສະຫະປະຊາຊາດເພື່ອການພັດທະນາ (UNDP).

- ອີງຕາມ ພາລະບົດບາດໃນການຄຸ້ມຄອງ ແລະນຳໃຊ້ທຶນຊ່ວຍເຫຼືອທາງການ ເພື່ອການພັດທະນາ ຂອງກະຊວງແຜນການ ແລະການລົງທຶນ ຕາມມາດຕາ 8 ຂອງດຳລັດເລກທີ 75/ນຍ, ລົງວັນທີ 20 ມີນາ 2009;
- ອີງຕາມ ໜັງສືສະເໜີຈາກ ກະຊວງແຮງງານ ແລະສະຫວັດດີການສັງຄົມ, ສະບັບເລກທີ 1630/ຮສສ, ລົງວັນທີ 30 ພຶດສະພາ 2017 ກ່ຽວກັບ ບັນຫາດັ່ງກ່າວຂ້າງເທິງ;
- ອີງຕາມ ການຄົ້ນຄ້ວາ ແລະນຳສະເໜີ ຂອງກົມຮ່ວມມືສາກົນ, ສະບັບເລກທີ ......../ຜທ.ຣມສ-ສປຊ. 8, ລົງວັນທີ ......./......../2017.

ກະຊວງແຜນການ ແລະການລົງທຶນ ຂໍຖືເປັນກຽດແຈ້ງມາຍັງທ່ານຊາບວ່າ: ເຫັນດີ ອະນຸມັດຮັບເອົາ ແຜນງານສະໜັບສະໜູນ ການສ້າງຄວາມເຂັ້ມແຂງ ໃຫ້ແກ່ຫ້ອງການ ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອການແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງຢູ່ ສປປ ລາວ (NRA) ແລະໂຄງການເກັບກູ້ລະເບີດແຫ່ງຊາດ (UXO Lao) ສົກປີ 2017-2021, ຊຶ່ງໄດ້ຮັບການສະໜັບສະໜູນຈາກ ອົງການ ສະຫະປະຊາຊາດເພື່ອການພັດທະນາ (UNDP), ໃນມູນຄ່າທັງໝົດ 84,404,245 ໂດລາສະຫະລັດ, ສຳລັບໄລຍະເວລາໃນການຈັດຕັ້ງປະຕິບັດແມ່ນ ເລີ່ມແຕ່ ວັນທີ 01 ມິຖຸນາ 2017 ເຖິງ ວັນທີ 31 ທັນວາ 2021.

ພ້ອມນີ້, ສະເໜີໃຫ້ ພາກສ່ວນກ່ຽວຂ້ອງ ເປັນເຈົ້າການຄຸ້ມຄອງນຳໃຊ້ທຶນຊ່ວຍເຫຼືອດັ່ງກ່າວ ແລະເຊັນຮັບຮອງເອົາແຜນງານດັ່ງກ່າວ ຢ່າງເປັນທາງການ ຮ່ວມກັບ ອົງການ ສະຫະປະຊາຊາດ ເພື່ອການພັດທະນາ (UNDP) ພ້ອມທັງຈັດຕັ້ງປະຕິບັດວຽກງານໃຫ້ມີປະສິດທິຜົນ, ມີການຈັດຕັ້ງຄະນະຊີ້ນຳ ແລະຄຸ້ມຄອງແຜນງານຢ່າງລະອຽດ, ພ້ອມທັງສະຫຼຸບລາຍງານ ການຈັດຕັ້ງປະຕິບັດແຜນງານ ລວມທັງການນຳໃຊ້ທຶນດັ່ງກ່າວໃຫ້ ກະຊວງແຜນການ ແລະການລົງທຶນ ຊາບເປັນປະຈຳທຸກໆໄຕມາດ, 06 ເດືອນ ແລະປະຈຳປີ ຕາມລະບຽບການ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະຈັດຕັ້ງປະຕິບັດຕາມທາງຄວນດ້ວຍ.

**ລັດຖະມົນຕີ**

ປອ ສຸພັນ ແກ້ວມີໄຊ